# ສະມະນາກ່ຽວກັບສິນຫ້າ

## ໑- ຄວາມຫມາຍໃນຄຳວ່າສິນ ............................................ (໑໐-໒໐ ນາທີ)

- ໃຜຈະເປັນຜູ່ໃຫ້ຄວາມຫມາຍ(définition) ສິນຫລືສີລະໄດ້ແນ່ ? (໒-໓ ຄົນເວົ້າກໍພໍແລ້ວ)
- ສິນທີ່ເຮົາລົມກັນຢູ່ນີ້ມີມາກ່ອນພຣະພຸທສາສນາບໍຫລືບໍ່ ?
- ເປັນຫຍັງເພິ່ນຈິ່ງຮ້ອງວ່າ ສິນ ?

## ໒- ເນື້ອໃນໃຈຄວາມຂອງສິນຫ້າ ແລະ ການເຂົ້າໃຈໃນບາລີໃຫ້ແຕກສານ

- ສິນຫ້າມີຈັກຂໍ້ ແລະ ມີຂໍ້ໃດແນ່ ? (ໃຫ້ເລົ່າສຸດກົກສຸດປາຍຊື່ໆ ບໍ່ໃຫ້ເວົ້າຫຍັງເທື່ອ)

| | |
|---|---|
| ໑- ປານາຕິປາຕາ | ເວຣະມະນີ ສິກຂາປະທັງ ສະມາທິຍາມິ |
| ໒- ອະທິນນາທານາ | ເວຣະມະນີ ສິກຂາປະທັງ ສະມາທິຍາມິ |
| ໓- ກາເມສຸມິດສາຈາຣາ | ເວຣະມະນີ ສິກຂາປະທັງ ສະມາທິຍາມິ |
| ໔- ມຸສາວາທາ | ເວຣະມະນີ ສິກຂາປະທັງ ສະມາທິຍາມິ |
| ໕- ສຸຣາເມຣະຍະມັດຊະປະມາທັດຖານາ | ເວຣະມະນີ ສິກຂາປະທັງ ສະມາທິຍາມິ |

ຫມາຍເຫດ: ........................................................(໒໐ ຫາ ໓໐ ນາທີ [໓໐/໔໐])

ຫລັງຈາກມີຄົນໃນຄນະມາເລົ່າແລ້ວຈິ່ງໃຫ້ກັມມະການບອກຄົນຟັງຮູ້ວ່າ ຖ້າຜູ່ໃດຢາກໄດ້ບົດອາຣາທະນາສິນຫ້າເປັນພາສາລາວ ໃຫ້ໄປສາກລົງເອົາມາອ່ານໄດ້ (download, ສາກລົງ) ຢູ່ທີ່ http://laodhamma.free.fr ຖ້ານ eBook ສຳລັບການຮຽນພຣະທັມຂອງທ່ານແຕ່ລະມື້ ຢູ່ໃນວັດບົນສາຍຫ້ອງນີ້ (en ligne(ຄາສາຍ), online)

- ໃຜສາມາດແປຄຳບາລີທີ່ຢູ່ໃນສິນແຕ່ລະຂໍ້ໄດ້ແນ່ ? (ແປສັບບາລີ ບໍ່ແມ່ນຕີຄວາມຫມາຍ)
- ເປັນຫຍັງຄົນທັງຫລາຍມັກເວົ້າວ່າ ສິນ ຄື ຂໍ້ຫ້າມ ທັງໆທີ່ຢູ່ໃນບົດນີ້ບໍ່ມີຄຳແປວ່າ ຫ້າມ ?
- ຄຳວ່າ ຫ້າມກັບບັງຄັບໃນພາສາລາວ ມີຄວາມຫມາຍແຕກຕ່າງກັນຢ່າງໃດແນ່ ?
- ຢູ່ໃນສິນຫ້າຂໍ້ນີ້ ເປັນຫຍັງເພິ່ນຈິ່ງຊູນເອົາ «ປານາຕິປາຕາ» ຂຶ້ນກ່ອນ «ອະທິນນາທານາ» ຫລືຂຶ້ນກ່ອນຂໍ້ອື່ນໆ ໃຜຈະມາໃຫ້ຄຳຕອບໄດ້ແນ່ ?

ຄຳແພວ ພູເພັຊຣ໌ລິນທອງ ໑໓/໐໑/໐໗

# ສະມະນາກ່ຽວກັບສິນຫ້າ

## ໓- ອານິສົງ ຫລື ຜົນກັມຂອງສິນຫ້າ ............ (໕໐ ຫາ ໖໐ ນາທີ [໑:໒໐/໑:໕໐])

ຫນ້າທີ່ຂອງນັກວິເຄາະໃນບັ້ນນີ້ກ່ຽວກັບ «ຜົລກັມ» ຂອງສິນຈຳນວນຫ້າຂໍ້ ຈະເນັ້ນຫນັກໃສ່ການບັນຣະຍາຍຜົນຂອງການປະຕິບັດສິນແຕ່ລະຂໍ້ວ່າ ຖ້າເຮົາຮັກສາສິນແຕ່ລະຂໍ້ໄດ້ ຫລື ປະຕິບັດສິນແຕ່ລະຂໍ້ໄດ້ ຈະເກີດມີຜົນດີຫຍັງແນ່ສຳລັບຜູ່ປະຕິບັດ ແລະຖ້າວ່າ ເຮົາຮັກສາສິນຂໍ້ດັ່ງກ່າວບໍ່ໄດ້ ຈະມີຜົນສະທ້ອນຫຍັງແນ່ເກີດຂຶ້ນ

- ສິນຫນຶ່ງ: (ໃຫ້ນັກວິເຄາະທີ່ຖືກເຊີນມາໃນມື້ນີ້ ຂຍາຍຄວາມຕາມຄວາມສາມາດຂອງໃຜລາວ
- ສິນຍີ່: ແລະ ໂຄສົກຫລືກັມມະການ ຕ້ອງເຊີນແຕ່ລະຄົນຂຶ້ນເວົ້າເຊັ່ນດຽວກັນ ເພື່ອເສີມ
- ສິນສາມ: ກັບຜູ່ທີ່ໄດ້ເວົ້າແລ້ວ ເຂົ້າເປັນສ່ວນປະກອບໃນການສັມມນາເທື່ອນີ້ ແຕ່ຕ້ອງໃຫ້
- ສິນສີ່: ນັກວິເຄາະແຕ່ລະຄົນ ບັນຣະຍາຍໄປພຽງຂໍ້ດຽວເທົ່ານັ້ນ ຈົບແລ້ວ ຈິ່ງດຳເນີນຂໍ້ຕໍ່
- ສິນຫ້າ: ໄປຈົນສິ້ນໃນຂໍ້ຫ້າ ຫລື ຂໍ້ທີຫ້າ ຈິ່ງຈົບການວິເຄາະຜົນກັມຂອງສິນຫ້າ)

ການວິເຄາະຜົນກັມຂອງສິນຫ້ານີ້ຕ້ອງໃຊ້ເວລາດົນກວ່າພາກສ່ວນອື່ນໆ ຕ້ອງກຳນົດເວລາໄວ້ໃຫ້ດີ ເພາະວ່າ ຄົນສ່ວນຫລາຍສາມາດເວົ້າໄດ້ ເຖິງແມ່ນວ່າ ເຂົາຈະບໍ່ຮູ້ຈັກສິນຫ້າກໍຕາມ ແຕ່ວ່າໂຄສົກພ້ອມດ້ວຍຄນະ ຕ້ອງໄດ້ຮຽນຮູ້ກ່ຽວກັບເຣື່ອງນີ້ ບໍ່ຫລາຍກໍຫນ້ອຍ ເພາະວ່າ ໃນເມື່ອເຂົາເວົ້າອອກນອກເຣື່ອງ ພວກທ່ານຈະບໍ່ຮູ້ຈັກດຶງເຂົາເຂົ້າມາຄືນ

## ໔- ການປະຕິບັດສິນຫ້າ .................................. (໑໐-໒໐ ນາທີ [໑:໖໐/໒:໑໐])

- ເປັນຫຍັງເພິ່ນຈິ່ງເອົາສິນຫ້າຂໍ້ນີ້ ມາເປັນພື້ນຖານການປະຕິບັດໃນພຣະພຸທສາສນາ ?
- ເຮົາຄວນປະຕິບັດສິນດັ່ງກ່າວທຸກໆຂໍ້ບໍຈິ່ງຈະຢູ່ໃນກໍຣະນີທີ່ເຮົາຮ້ອງກັນວ່າ ສົມບູນແບບ ຄືບໍຣິບູນຫລືວ່າ ປະຕິບັດສາມສີ່ຂໍ້ເທົ່ານັ້ນໃຫ້ໄດ້ດີທີ່ສຸດ ກໍພໍກັບການສົມບູນແບບ ໄດ້ ?
- ຖ້າເຮົາປະຕິບັດສິນຫ້າໄດ້ຢ່າງບໍຣິບູນມັນຈະເກີດມີຫຍັງຂຶ້ນແກ່ຕົວເຮົາເອງ ? (ຖ້າປະຕິບັດສິນບໍ່ໄດ້ ກໍປະຕິບັດສັມມາທິບໍ່ໄດ້ດີ ແລະ ຖ້າປະຕິບັດສັມມາທິບໍ່ໄດ້ ມັນກໍບໍ່ເກີດປັນຍາ ຖ້າບໍ່ເກີດປັນຍາ ກໍບໍ່ມີທົນທາງຈະພົ້ນທຸກໄດ້ນັ້ນເອງ)
- ທຸກຄົນມີສິດ ຫລືວ່າ ສາມາດປະຕິບັດສິນຫ້າໄດ້ບໍ ບໍ່ວ່າຈະເປັນຄົນກະໂຕຫລິກຫລືເປັນຄົນອິດສະລາມກໍດີ ?
- ການປະຕິບັດສິນຫ້າ ຫມາຍຄວາມວ່າ ຫລື ບໍ່ຫມາຍຄວາມວ່າ ນັບຖື ພຸທສາສນາ ຫລືວ່າ

ສະມະນາກ່ຽວກັບສິນຫ້າ

ເຂົ້າເປັນ «ຄົນພຸດ» ດັ່ງທີ່ເຮົາເຄີຍໄດ້ຍິນກັນຢູ່ຕລອດເວລາ ?

## ໕- ວ່າດ້ວຍ ກາຍ ວາຈາ ໃຈ ................................ (໒໐-໓໐ ນາທີ [໑:໕໐/໒:໔໐])

- ສິນປູບສເມືອນກົດຂໍ້ຣະບຽບແບບນຶ່ງ ຊຶ່ງເພິ່ນວາງປະໄວ້ໃນພຣະພຸທສາສນາ ສຳລັບຮັກສາກາຍວາຈາຂອງແຕ່ລະຄົນໃຫ້ຮຽບຮ້ອຍ ແລະບາງຄັ້ງເພິ່ນກໍຍັງກ່າວວ່າ ກາຍ ວາຈາ ໃຈ ພາຍໃນສິນຫ້າຂໍ້ນີ້ ມີຂໍ້ໃດແນ່ທີ່ເພິ່ນວາງໄວ້ສຳລັບກາຍ ສຳລັບວາຈາ ແລະ ສຳລັບໃຈ ໃຜຈະເປັນຜູ່ມາໃຫ້ຄວາມກະຈ່າງແຈ້ງເພີ່ມເຕີມ ຫລືຈະນຳເອົາຂໍ້ມູນມາອ້າງອີງຕື່ມອີກຍິ່ງເປັນການດີ ?

## ໖- ສລຸບຄວາມ

- ໃຫ້ໂຍສົກກັບກັມມະການຕົກລົງກັນເອງ ສຳລັບຂໍ້ນີ້

**ຫມາຍເຫດ:** ເນື່ອງຈາກວ່າ ຈະມີການສັມນາຣະຫວ່າງຄົນລາວທົ່ວໂລກຜ່ານ ອິນເທີແນັດກ່ຽວກັບເຣື່ອງສິນຫ້າໃນມື້ວັນອາທິດທີ ໒໗/໐໑/໒໐໐໗ ເວລາ ໑໕ ໂມງຂອງເມືອງຝຣັ່ງ ຈິ່ງໄດ້ຂຽນຫນັງສືນີ້ ຂຶ້ນມາ ສຳລັບໃຊ້ເປັນຈຸດຕ່າງໆໃນການສົນທະນາຄັ້ງນີ້ ຫວັງວ່າ ຫນັງສືອັນນີ້ຈະເປັນປໂຍດໃຫ້ ແກ່ໂຍສົກພ້ອມດ້ວຍກັມມະການທຸກຄົນ

ແຂກຜູ່ມີກຽດທີ່ຖືກເຊີນເຂົ້າຮ່ວມມີດັ່ງນີ້ (ໃຫ້ດັດແປງຕາມຄວາມຕ້ອງການ):

| | |
|---|---|
| - ອ້າຍ ສີພັນ | - ເມດຊາຍ |
| - ອ້າຍ ລາວເຫນືອ | - ອະນຸໄຊຍະ (ຕ້ອງຊອກຫາລາວເດີ ລາວມີສາມາດ) |
| - ອ້າຍ ກົງກວຽນ | - ເອື້ອຍ ປາຣີສອນ |
| - ຫມໍຜີ (ຕາມທັມມະດາ ຄາແລ້ວ) | - ດຣ. ພູທົງ (ນ້ອງເຂີຍຂອງເອື້ອຍ ປາຣີສອນ) |
| - ຣາຊາກາຕູ່ນ | - ອ້າຍ ຈຳປາແດງ (ສາວຫລັກເຈັດ & ຜູ່ຫວັງດີ ??) |

ເມື່ອວັນທີ ໑໓/໐໑/໒໐໐໗ ເດືອນ ມົກກະຣາ ພ.ສ. ໒໕໕໐ ແຫ່ງເມືອງ ປາຣີສ໌ ທີ່ປະເທດ ຝຣັ່ງ

ຄຳແພວ ພູເພັຊຣ໌ລິນທອງ